ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ......0101......./ກປ

ນະຄອນຫຼວງວຽງຈັນ, ວັນທີ......20 JAN 2020......

**ຄຳສັ່ງ**

**ກ່ຽວກັບ ການຜະລິດພືດເປັນສິນຄ້າ ເພື່ອສົ່ງອອກ**

**ໄປ ສປ ຈີນ**

**ເຖິງ**: - ທ່ານ ຫົວໜ້າຫ້ອງການ, ກົມ ແລະ ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ປະຈຳແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ຄຳສັ່ງ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ ການນຳເຂົ້າ-ສົ່ງອອກ ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ ເລກທີ 12/ນຍ ລົງວັນທີ 16/10/2019;
- ອີງຕາມ ອານຸສັນຍາ ກ່ຽວກັບຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ສຳລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ສົ່ງອອກໄປຍັງ ສປ ຈີນ ທີ່ໄດ້ລົງນາມ ແລະ ປະກາດໃຊ້ໃນແຕ່ລະໄລຍະ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມການຄົ້ນຄ້ວາ ແລະ ສະເໜີ ຂອງກົມປູກຝັງ.

ເພື່ອປະຕິບັດຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປັບປຸງບັນຍາກາດການດຳເນີນທຸລະກິດກະສິກຳ ໃນຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ພ້ອມທັງອຳນວຍຄວາມສະດວກທາງດ້ານການຄ້າ ໃຫ້ແກ່ ການສົ່ງອອກ ແລະ ສົ່ງອອກຕໍ່ ພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວ ໄປຍັງ ສປ ຈີນ ໃຫ້ມີຄວາມສະດວກ, ກະທັດຫັດ, ວ່ອງໄວ, ໂປ່ງໃສ ແລະ ສອດຄ່ອງຕາມສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ແລະ ສປ ຈີນ ເປັນພາຄີ. ສະນັ້ນ, ເພື່ອເຮັດໃຫ້ການຜະລິດພືດ ເປັນສິນຄ້າ ມີທ່າອຽງຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ພ້ອມທັງຮັບປະກັນ ຄວາມສະອາດ, ປອດໄພ ໄດ້ຕາມມາດຕະຖານສາກົນ ແລະ ສອດຄ່ອງກັບເງື່ອນໄຂດ້ານສຸຂານາໄມພືດ ສຳລັບການນຳເຂົ້າຂອງປະເທດຄູ່ຄ້າ ໂດຍສະເພາະແມ່ນ ສປ ຈີນ.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ໃຫ້ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຂະແໜງປູກຝັງ, ດ່ານກັກກັນພືດ ໃນການຄຸ້ມຄອງບັນດາຫົວໜ່ວຍທຸລະກິດ ການປູກຝັງ ແລະ ຂະບວນການຜະລິດ, ການປຸງແຕ່ງ ພືດ

ແລະ ຜະລິດຕະພັນພືດ ເປັນສິນຄ້າພາຍໃນແຂວງ ໃຫ້ຮັດກຸມຕາມເຕັກນິກ ແລະ ລະບຽບການ, ກໍານົດພືດບຸລິມະສິດທີ່ມີທ່າແຮງ ແລະ ເປົ້າໝາຍ ເພື່ອສົ່ງອອກໃນແຕ່ລະໄລຍະ, ຂຶ້ນບັນຊີສັດຕູພືດ ກັກກັນຂອງພືດບຸລິມະສິດ ແລະ ກະກຽມຂໍ້ມູນດ້ານວິຊາການ ເພື່ອເປັນບ່ອນອີງໃຫ້ແກ່ ການເຈລະຈາດ້ານເຕັກນິກການເປີດຕະຫຼາດ ຕາມຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ ຂອງ ສປ ຈີນ ທີ່ໄດ້ກໍານົດໄວ້;

2. ໃຫ້ກົມປູກຝັງ, ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ, ນະຄອນຫຼວງວຽງຈັນ ແລະ ພະແນກການອື່ນທີ່ກ່ຽວຂ້ອງ ໂຄສະນາເຜີຍແຜ່ ອານຸສັນຍາ ກ່ຽວກັບຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ ສໍາລັບການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ໄປຍັງ ສປ ຈີນ ທີ່ໄດ້ລົງນາມ ແລະ ປະກາດໃຊ້ໃນແຕ່ລະໄລຍະ ໃຫ້ແກ່ຜູ້ຜະລິດ, ບັນດາຫົວໜ່ວຍທຸລະກິດການປູກຝັງ, ພາກສ່ວນກ່ຽວຂ້ອງ ເຂົ້າໃຈຢ່າງເລິກເຊິ່ງ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

3. ໃຫ້ກົມປູກຝັງ ໃນນາມເປັນອົງການປ້ອງກັນພືດ ແຫ່ງຊາດ ຂອງ ສປປ ລາວ (NPPO) ແຕ່ງຕັ້ງຜູ້ປະສານງານ ເພື່ອເຮັດໜ້າທີ່ປະສານງານ, ຕິດຕໍ່ພົວພັນ, ແຈ້ງລາຍການພືດ, ບັນຊີລາຍຊື່ຜູ້ປະກອບການຜະລິດເພື່ອສົ່ງອອກ ແລະ ປະສານງານ ກັບ ທູດເສດຖະກິດປະຈໍາສະຖານທູດ ສປປ ລາວ ປະຈໍານະຄອນຫຼວງປັກກິ່ງ, ສປ ຈີນ ແລະ ອົງການຄຸ້ມຄອງບໍລິຫານພາສີ ຂອງ ສປ ຈີນ (GACC) ເພື່ອສະເໜີເຈລະຈາດ້ານເຕັກນິກການເປີດຕະຫຼາດ ເພື່ອສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວ ໄປຍັງ ສປ ຈີນ ໃນແຕ່ລະໄລຍະ;

4. ໃຫ້ກົມປູກຝັງ ຄົ້ນຄ້ວາ, ກວດກາ ແລະ ປະເມີນຄືນ ບັນດານິຕິກໍາ ແລະ ຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ ທີ່ສອງຝ່າຍໄດ້ເຊັນສັນຍາ ແລະ ໄດ້ສົ່ງອອກ ໄປ ສປ ຈີນ ໃນໄລຍະຜ່ານມາ ເຊັ່ນ: ສາລີແຂງ, ມັນຕົ້ນ, ໝາກກ້ວຍ, ໝາກໂມ ແລະ ເຂົ້າສານ ພ້ອມທັງໃຫ້ຄໍາປຶກສາ ແລະ ແນະນໍາ ກ່ຽວກັບ ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ ໃຫ້ບັນດາຫົວໜ່ວຍທຸລະກິດທີ່ມີຈຸດປະສົງເພື່ອສົ່ງອອກ ພືດ ແລະ ຜະລິດຕະພັນພືດ (ຜູ້ເກົ່າ ແລະ ຜູ້ໃໝ່) ໃຫ້ມີຄວາມເຂົ້າໃຈ ແລະ ປະຕິບັດຕາມເງື່ອນໄຂດ້ານສຸຂານາໄມພືດ ແລະ ລະບຽບການນໍາເຂົ້າ ຂອງອົງການຄຸ້ມຄອງບໍລິຫານພາສີ ຂອງ ສປ ຈີນ ໃນໄລຍະໃໝ່ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ ຢ່າງເຂັ້ມງວດ;

5. ໃຫ້ກົມປູກຝັງ ເປັນເສນາທິການໃຫ້ແກ່ກະຊວງກະສິກໍາ ແລະ ປ່າໄມ້ ໃນການຮ່າງອານຸສັນຍາ ກ່ຽວກັບຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ ສໍາລັບ ພືດ ແລະ ຜະລິດຕະພັນພືດ ທີ່ສົ່ງອອກ ໄປຍັງ ສປ ຈີນ ໃນແຕ່ລະໄລຍະ ເພື່ອລົງນາມເຊັນອານຸສັນຍາ ສອງຝ່າຍຮ່ວມກັນ ລະຫວ່າງກະຊວງກະສິກໍາ ແລະ ປ່າໄມ້ ແຫ່ງ ສປປ ລາວ ແລະ ອົງການຄຸ້ມຄອງບໍລິຫານພາສີ ຂອງ ສປ ຈີນ;

6. ໃຫ້ ກົມປູກຝັງ ແຈ້ງບັນຊີລາຍການພືດ ແລະ ຜະລິດຕະພັນພືດ ພ້ອມທັງແຈ້ງລາຍຊື່ຜູ້ປະກອບການຜະລິດເພື່ອ ສົ່ງອອກ (Establishment Name) ທີ່ໄດ້ຮັບການຢັ້ງຢືນ ແລະ ຮັບຮອງ ຈາກກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້ ຂອງສປປ ລາວ ເພື່ອສົ່ງໃຫ້ ອົງການຄຸ້ມຄອງບໍລິຫານພາສີ ຂອງ ສປ ຈີນ ພິຈາລະນາ ແລະ ອອກເລກລະຫັດພາສີນໍາເຂົ້າ ຂອງ ສປ ຈີນ (Register Number);

7. ສໍາລັບຂັ້ນຕອນການຂຶ້ນທະບຽນສະຖານທີ່ປະກອບການຜະລິດ (Establishment), ຜູ້ປະກອບການຜະລິດເພື່ອສົ່ງອອກ (Establishment Name) ແລະ ມາດຕະການສຸຂານາໄມພືດ ສໍາລັບ ສົ່ງອອກພືດ ແລະ ຜະລິດຕະພັນພືດ ໃຫ້ປະຕິບັດຕາມ ຂໍ້ຕົກລົງ ວ່າດ້ວຍ ມາດຕະການສຸຂານາໄມພືດ ສໍາລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພືດ ແລະ ວັດຖຸຕ້ອງຄວບຄຸມ ສະບັບ ເລກທີ 2986/ກປ, ລົງວັນທີ 28 ມິຖຸນາ 2019 ແລະ ບົດແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການສຸຂານາໄມພືດ ສໍາລັບສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວໄປຍັງ ສປ ຈີນ ສະບັບເລກທີ 2459/ກປຝ ລົງວັນທີ 01 ພະຈິກ 2019;

8. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ປະຈຳແຂວງ, ຊີ້ນຳຂະແໜງປູກຝັງ, ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ, ສູນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແລະ ໜ່ວຍງານປູກຝັງ ລົງຊຸກຍູ້ສົ່ງເສີມການຜະລິດພືດເປັນສິນຄ້າ ເລີ່ມແຕ່ການປູກ ຈົນເຖິງສົ່ງອອກ ຂອງແຕ່ລະພືດທີ່ມີເປົ້າໝາຍ ແລະ ທ່າແຮງສົ່ງອອກ ໃຫ້ຖືກຕ້ອງຕາມມາດຕະຖານການຜະລິດກະສິກຳສະອາດ, ມາດຕະຖານສິນຄ້າກະສິກຳ ແລະ ມາດຕະຖານສາກົນດ້ານສຸຂານາໄມພືດ ທີ່ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສປ ຈີນ ໄດ້ເຊັນອານຸສັນຍາຮ່ວມກັນ;

9. ໃຫ້ກົມປູກຝັງ ເພີ່ມທະວີການປະສານງານ ແລະ ພົວພັນຮ່ວມມື ກັບ ຂະແໜງການກ່ຽວຂ້ອງເປັນຕົ້ນ ອຸດສາຫະກຳ ແລະ ການຄ້າ, ການເງິນ, ປ້ອງກັນຄວາມສະຫງົບ, ຖະແຫຼງຂ່າວ ແລະ ວັດທະນາທຳ, ສະພາແຫ່ງຊາດ ແລະ ການຕ່າງປະເທດ ໂດຍຖືເອົາທູດເສດຖະກິດ ທີ່ສັງກັດຢູ່ສະຖານທູດລາວ ປະຈຳຢູ່ນະຄອນຫຼວງປັກກິ່ງ, ສປ ຈີນ ເປັນຕົວແທນໃນການພົວພັນ ແລະ ປະສານງານ ໂດຍກົງ ກັບອົງການຄຸ້ມຄອງບໍລິຫານພາສີ ຂອງ ສປ ຈີນ;

10. ໃຫ້ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ ນະຄອນຫຼວງ ເພີ່ມທະວີ ການພົວພັນຮ່ວມມື ກັບ ເຈົ້າໜ້າທີ່ກວດກາ ແລະ ກັກກັນພືດ ຂອງ ສປ ຈີນ ປະຈຳດ່ານຊາຍແດນເຂົ້າ-ອອກ ເພື່ອພ້ອມກັນໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ຜູ້ທີ່ສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຜ່ານດ່ານສາກົນ ແລະ ດ່ານທ້ອງຖິ່ນ ເປັນຕົ້ນ ດ່ານບໍ່ເຕັນ-ບໍ່ຫານ ແລະ ດ່ານອື່ນໆ ໃຫ້ຫັນເຂົ້າສູ່ການປະຕິບັດຢ່າງເປັນລະບົບ ແລະ ເຂັ້ມງວດ. ພ້ອມດຽວກັນນັ້ນ, ຍາດແຍ່ງ ການຊ່ວຍເຫຼືອທຶນຮອນ ແລະ ເຕັກນິກວິຊາການ ຈາກລັດຖະບານຈີນ ເພື່ອພັດທະນາ ແລະ ປັບປຸງລະບົບສຸຂານາໄມພືດ ຂອງ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

11. ມອບໃຫ້ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ;

12. ຄຳສັ່ງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳສັ່ງ ຂອງ ລັດຖະມົນຕີ ກ່ຽວກັບການຊຸກຍູ້ການຜະລິດກະສິກຳເປັນສິນຄ້າສົ່ງອອກ ສປ ຈີນ ສະບັບເລກທີ 2344/ກປ, ລົງວັນທີ 30 ມິຖຸນາ 2014 ແລະ ໃຫ້ຍົກເລີກ ບົດແນະນຳຂອງກົມປູກຝັງ ກ່ຽວກັບການຈົດທະບຽນພື້ນທີ່ປູກ ແລະ ສະຖານທີ່ຫຸ້ມຫໍ່ຜະລິດຕະພັນພືດ ສົ່ງອອກ ໄປ ສປ ຈີນ ສະບັບເລກທີ 1266/ກປຝ, ລົງວັນທີ 16/06/2016.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

ບ່ອນນຳສົ່ງ:

1. ຫ້ອງການສູນກາງພັກ 01 ສະບັບ (ເພື່ອລາຍງານ);
2. ຫ້ອງວ່າການລັດຖະບານ 01 ສະບັບ (ເພື່ອລາຍງານ);
3. ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ (ເພື່ອຊາບ);
4. ກະຊວງການເງິນ 01 ສະບັບ (ເພື່ອຊາບ);
5. ກະຊວງການຕ່າງປະເທດ 01 ສະບັບ (ເພື່ອຊາບ);
6. ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ (ເພື່ອຊາບ);
7. ສະຖານທູດລາວ ປະຈຳປັກກິ່ງ, ສປ ຈີນ 01 ສະບັບ (ເພື່ອຊາບ);
8. ຫ້ອງການຄະນະກຳມະທິການຮ່ວມມື ລາວ-ຈີນ 01 ສະບັບ (ເພື່ອຊາບ);
9. ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ ບ່ອນລະ 01 ສະບັບ (ເພື່ອຊຸກຍູ້);
10. ເກັບມ້ຽນ 01 ສະບັບ;

ປອ.ລຽນ ທິແກ້ວ